ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 078 /ທຄຮ
ນະຄອນຫຼວງວຽງຈັນ, ວັນທີ 15 ພຶດສະພາ 2026

JDB
ທະນາຄານຮ່ວມພັດທະນາ ມະຫາຊົນ

# ມະຕິ
## ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ
## ສະໄໝສາມັນ ຄັ້ງທີ II, ປະຈຳປີ 2026

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດຫຼັກຊັບ ແລະ ບໍລິສັດ ຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມ ກົດລະບຽບຂອງທະນາຄານຮ່ວມພັດທະນາ ມະຫາຊົນ ສະບັບເລກທີ 064/ທຄຮ, ລົງວັນທີ 5 ມີນາ 2026.

ຜ່ານການຄົ້ນຄວ້າ ແລະ ແລກປ່ຽນຄຳເຫັນຂອງບັນດາສະມາຊິກສະພາບໍລິຫານ ຢ່າງເລິກເຊິ່ງຕໍ່ກັບແຕ່ລະວາລະ ຂອງກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ (ທຄຮ) ສະໄໝສາມັນ ຄັ້ງທີ II ປະຈຳປີ 2026 (ຕໍ່ໄປນີ້ຮຽກວ່າ: ກອງປະຊຸມ), ໄດ້ເປີດຂຶ້ນ ໃນເວລາ: 14:00 ໂມງ, ຂອງວັນທີ 14 ພຶດສະພາ 2026, ທີ່ສຳນັກງານໃຫຍ່ ທະນາຄານຮ່ວມພັດທະນາ ມະຫາຊົນ, ໂດຍການເປັນປະທານຂອງ ທ່ານ ວິໄລ ສີພະພອນ, ປະທານສະພາບໍລິຫານ ໂດຍ ມີສະມາຊິກສະພາບໍລິຫານ ຈຳນວນ 8 ທ່ານ ເຂົ້າຮ່ວມ. ມີຄະນະອຳນວຍການ ແລະ ພະແນກທີ່ກ່ຽວຂ້ອງເຂົ້າຮ່ວມ ເປັນ ຜູ້ສັງເກດການ.

**ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ ມີມະຕິຕົກລົງ ດັ່ງນີ້:**

**ມາດຕາ 1** ພາຍຫຼັງພິຈາລະນາແລ້ວ ເຫັນດີຮັບຮອງເປັນເອກະພາບກັນ ໃນກອງປະຊຸມສະພາບໍລິຫານ ທຄຮ ສະໄໝ ສາມັນ ຄັ້ງທີ II, ປະຈຳປີ 2026 ເຊິ່ງລາຍລະອຽດ ມີດັ່ງນີ້:

1) ເຫັນດີຮັບຮອງເອົາບົດລາຍງານຜົນການເຄື່ອນໄຫວດຳເນີນທຸລະກິດຂອງ ທຄຮ ປະຈຳໄຕມາດ 1 ປີ 2026 ແລະ ບົດລາຍງານການເງິນຂອງ ທຄຮ ປະຈຳໄຕມາດ 1 ປີ 2026 (ຕົວເລກກ່ອນການກວດສອບ).

**ມາດຕາ 2** ການຈັດຕັ້ງປະຕິບັດ

ມອບໃຫ້ຄະນະອຳນວຍການ ທຄຮ ຈັດຕັ້ງປະຕິບັດມະຕິກອງປະຊຸມ ສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ໄດ້ຮັບຜົນດີ.

**ມາດຕາ 3** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານກອງປະຊຸມ**

ທະນາຄານ ແຫ່ງ ສປປ ລາວ
ທະນາຄານ ຮ່ວມພັດທະນາ ມະຫາຊົນ JOINT DEVELOPMENT BANK Public
ນະຄອນ ຫຼວງ ວຽງຈັນ

ວິໄລ ສີພະພອນ